# ມິຊຊາອາທິດທີ 13 ການົດທຳມະດາ ປີ B
## ວັນອາທິດທີ 27 ມີຖຸນາ 2021



**ພຣະວໍລະສານໂດຍນັກບຸນມັກໂກ 5, 21-43**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດຂ້າມທະເລຟາກພຸ້ນ. ມີຝູງຊົນມາກມາຍມາຊຸມກັນຢູ່ອ້ອມພຣະອົງ. ສ່ວນພຣະອົງປະທັບຢູ່ບົນຝັ່ງທະເລ. ມີຫົວໜ້າໂຮງທຳຜູ້ໜຶ່ງຊື່ຢາອີແນມເຫັນພຣະເຢຊູເຈົ້າ, ກໍມາຂາບລົງແທບພຣະບາດພຣະອົງ ແລະວອນຂໍພຣະອົງວ່າ: “ບຸດສາວຂອງຂ້ານ້ອຍຈວນຈະຕາຍຢູ່ແລ້ວ, ເຊີນພຣະອົງສະເດັດໄປປົກມືໃຫ້, ແລ້ວເຂົາຈະໄດ້ຣອດແລະມີຊີວິດ”. ພຣະເຢຊູເຈົ້າກໍສະເດັດໄປກັບເຂົາ. ຝູງຊົນທີ່ຕິດຕາມມາມີຈຳນວນມາກຈົນບຽດແຫຍ້ພຣະອົງໄປ.

ໃນເວລານັ້ນ, ມີຄົນມາແຕ່ເຮືອນທ່ານຢາອີເພື່ອແຈ້ງຂ່າວໃຫ້ເພິ່ນວ່າ: “ບຸດສາວຂອງທ່ານຕາຍແລ້ວ. ຢ່າໄປຣົບກວນພຣະອາຈານອີກເຮັດຫຍັງ?” ເມື່ອພຣະເຢຊູເຈົ້າໄດ້ຊາບຂ່າວນີ້ກໍຊົງກ່າວກັບຫົວໜ້າໂຮງທຳວ່າ: “ທ່ານຢ່າຢ້ານເລີຍ, ຂໍໃຫ້ເຊື່ອກໍເປັນພໍ”. ພຣະອົງບໍ່ໄດ້ປະໃຫ້ຜູ້ໃດຕິດຕາມພຣະອົງໄປ, ນອກຈາກເປໂຕ, ຢາໂກເບ ແລະຢວງຜູ້ນ້ອງຊາຍ.

ເມື່ອສະເດັດມາຮອດເຮືອນຂອງຫົວໜ້າໂຮງທຳ. ກໍເຫັນມີການອຶກກະທຶກ, ເຫັນຄົນຮ້ອງໄຫ້ແລະຮ້ອງສຽງດັງ. ເມື່ອສະເດັດເຂົ້າໃນເຮືອນ, ພຣະອົງຊົງກ່າວກັບພວກນັ້ນວ່າ: “ເປັນຫຍັງພວກເຈົ້າຈຶ່ງອຶກກະທຶກແລະຮ້ອງໄຫ້? ນາງນ້ອຍນັ້ນບໍ່ໄດ້ຕາຍດອກ, ແຕ່ນອນຫລັບຢູ່ເທົ່ານັ້ນ”. ພວກເຂົາກໍພາກັນຫົວຂວັນພຣະອົງ.

ພຣະອົງສັ່ງໃຫ້ທຸກຄົນອອກໄປນອກ, ເອົາໄວ້ແຕ່ບິດາ, ມານດາຂອງເດັກແລະສາວົກທີ່ຕິດຕາມພຣະອົງໄປເທົ່ານັ້ນ. ແລ້ວພຣະອົງສະເດັດເຂົ້າໄປໃນບ່ອນທີ່ເດັກຍິງນັ້ນນອນຢູ່. ພຣະອົງຊົງຈັບມືເດັກຍິງນັ້ນ ແລະສັ່ງວ່າ: “ຕາລີຕາກຸມ” ແປວ່າ “ນາງນ້ອຍເອີຍ! ເຮົາສັ່ງເຈົ້າຈົ່ງລຸກຂຶ້ນ” ທັນທີເດັກນັ້ນກໍລຸກຂຶ້ນແລະຍ່າງ. ນາງມີອາຍຸ12ປີ. ຄົນທັງຫລາຍມີຄວາມຕົກໃຈຢ່າງໃຫຍ່ຫລວງ. ແຕ່ພຣະເຢຊູເຈົ້າໄດ້ສັ່ງຫ້າມບໍ່ໃຫ້ຂ່າວນີ້ແກ່ຜູ້ໃດ. ແລ້ວພຣະອົງກໍສັ່ງໃຫ້ເອົາອາຫານມາໃຫ້ນາງນ້ອຍກິນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນວັນອາທິດນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈວ່າ ພຣະເຈົ້າຊຶ່ງພວກເຮົາເຊື່ອແລະນົບໄຫວ້ນັ້ນແມ່ນພຣະເຈົ້າຜູ້ຊົງຊີວິດ. ແລະພຣະອົງກໍປາດຖະໜາໃຫ້ທຸກຄົນທີ່ເຊື່ອໃນພຣະອົງໄດ້ຮອດຊີວິດ. ດັ່ງໃນບົດອ່ານທີໜຶ່ງວັນນີ້ຈາກໜັງສືຄວາມສະຫລາດກ່າວວ່າ: “ພຣະເຈົ້າບໍ່ໄດ້ສ້າງຄວາມຕາຍ. ແລະພຣະອົງກໍບໍ່ປາດຖະໜາໃຫ້ຜູ້ໃດຕ້ອງຕາຍເລີຍ. ແຕ່ຄວາມຕາຍໄດ້ເຂົ້າມາໃນໂລກຍ້ອນຄວາມອິດສາຂອງຜີປີສາດ”. ດ້ວຍເຫດນີ້, ຖ້າຜູ້ໃດຢູ່ຝ່າຍພຣະອົງກໍຈະໄດ້ຮັບຊີວິດ. ສ່ວນຜູ້ທີ່ຢູ່ຝ່າຍຜີປີສາດກໍຈະໄດ້ຮັບຄວາມຕາຍ.

ສ່ວນໃນພຣະວໍລະສານວັນນີ້, ກໍມີຫົວໜ້າໂຮງທຳຜູ້ໜຶ່ງຊື່ຢາອີທີ່ມີລູກສາວເຈັບໜັກກຳລັງຈະຕາຍ. ທ່ານໄດ້ມາຂາບລົງຕໍ່ໜ້າພຣະເຢຊູເຈົ້າແລະວອນຂໍຄວາມຊ່ວຍເຫລືອຈາກພຣະອົງໃຫ້ລູກສາວຂອງຕົນ. ຫົວໜ້າໂຮງທຳໃນສະໄໝນັ້ນເປັນຄົນທີ່ມີຖານະແລະອຳນາດໃນສັງຄົມ. ແຕ່ເຂົາຍອມກາບລົງເພື່ອວອນຂໍພຣະເຢຊູເຈົ້າ. ໝາຍວ່າເຂົາຍອມຮັບຮູ້ວ່າພຣະອົງເປັນຜູ້ທີ່ຊົງອຳນາດເໜືອເຂົາອີກ. ພຣະອົງສາມາດຊ່ວຍລູກສາວເຂົາໃຫ້ຫວິດຈາກພະຍາດຮ້າຍແຮງນີ້ໄດ້. ແລະໂດຍສະເພາະແມ່ນຫວິດຈາກຄວາມຕາຍ. ທັດສະນະແລະຄຳເວົ້າຂອງຫົວໜ້າໂຮງທຳນີ້ສະແດງອອກເຖິງຄວາມເຊື່ອຂອງເຂົາທີ່ມີຕໍ່ພຣະເຢຊູເຈົ້າ. ດ້ວຍເຫດນີ້ພຣະອົງຈຶ່ງໄດ້ຕອບຮັບຄຳວອນຂໍຂອງເຂົາ. ແລະຍ້ອນຄວາມເຊື່ອຂອງຫົວໜ້າໂຮງທຳນີ້ຈຶ່ງຊ່ວຍລູກສາວຂອງເຂົາໃຫ້ລຸກຂຶ້ນຈາກຄວາມຕາຍ. ໝາຍວ່າບໍ່ມີຫຍັງທີ່ເປັນໄປບໍ່ໄດ້ສຳລັບຜູ້ທີ່ເຊື່ອ.

ສ່ວນພວກເຮົາຜູ້ເປັນກຣິສຕັງເດ, ພວກເຮົາໄດ້ເຊື່ອໃນພຣະເຢຊູເຈົ້າບໍ? ຫລືພວກເຮົາເຊື່ອໃນຄວາມສາມາດແລະຄວາມຮັ່ງມີຂອງຕົນ? ພວກເຮົາໄດ້ວິງວອນພຣະເຢຊູເຈົ້າໃຫ້ມາປິ່ນປົວພວກເຮົາຜູ້ເປັນຄົນບາບບໍ? ພວກເຮົາໄດ້ໃຫ້ພຣະອົງປຸກພວກເຮົາຂຶ້ນຈາກຄວາມຕາຍແລະຄວາມຫລອກລວງຕ່າງໆບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດທະວີຄວາມເຊື່ອໃຫ້ລູກດ້ວຍ. ເພື່ອລູກຈະໄດ້ຮູ້ຈັກແລ່ນມາຫາພຣະອົງ. ແລະເພິ່ງອີງພຣະອົງຜູ້ເປັນບໍ່ເກີດແລະທຸກສິ່ງຢ່າງຂອງລູກ. ໂຜດຊ່ວຍລູກໃຫ້ລຸກຂຶ້ນຈາກບາບຜິດຕ່າງໆຂອງລູກ. ເພື່ອລູກຈະໄດ້ມີຊີວິດໃໝ່ໃນຄວາມຮັກຂອງພຣະອົງ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ